# ເຊີນຮ່ວມກອງປະຊຸມ ການສັມນາສິລປະຫມໍລໍາ ແລະວັທນະທັມລ້ານຊ້າງ

ການສືບທອດ ມໍຣະດົກສິລປະຫມໍລໍາ ວັທນະທັມ ແລະ ພາສາຂອງຊົນເຜົ່າລ້ານຊ້າງ

## ໂດຍກຸ່ມ ສິລປິນຫມໍລໍາອີສານ

# ຄວາມເປັນມາ

ວັທນະທັມແລະພາສາ ຂອງເຜົ່າພັນລ້ານຊ້າງ ຖືວ່າເປັນສິ່ງທີ່ຢູ່ຄູ່ພູມີພາກເອເຊັຽຕາວັນອອກສ່ຽງໃຕ້ ມາຕັ້ງແຕ່ບັນພະບູຣຸສ. ໃນສມັຍປັຈຈຸບັນ ແມ່ນວ່າສະພາບທາງການເມືອງ ແລະ ການປົກຄອງ ຈະແບ່ງແຍກເປັນປະເທດຕ່າງໆ ມີເຂດພົມແດນຂອງແຕ່ລະຊາດ ໂດຍ ແບ່ງແຍກກັນຢ່າງຊັດເຈນ ແຕ່ວັທນະທັມແລະພາສາ ຂອງເຜົ່າພັນລ້ານຊ້າງ ກໍບໍ່ໄດ້ແບ່ງເຂຕຫລືພົມແດນ.ວັທນະທັມ ແລະ ພາສາ ຊຶ່ງເປັນອັນນຶ່ງອັນດຽວກັນ ຂອງເຜົ່າພັນລ້ານຊ້າງ ຍັງຄົງດໍາຣົງຢູ່ຢ່າງຫມັ້ນຄົງ.

ເຖິງແມ່ນວ່າເຜົ່າພັນລ້ານຊ້າງຈະກະຈັດກະຈ່າຍຢູ່ໃນປະເທດຕ່າງໆ ນອກເຫນືອຈາກປະເທດໄທຍແລະລາວ ຊຶ່ງຖືວ່າເປັນແກ່ນສານຂອງເຜົ່າພັນລ້ານຊ້າງຊຶ່ງໄດ້ແກ່ ຈີນ,ວຽຕນາມ,ພມ້າ,ກັມພູຊາ,ອິນເດັຽແລະແມ່ນວ່າເຜົ່າພັນລ້ານຊ້າງ ຈະຍັງຄົງຍຶດຖືປະຕິບັດຕາມຮີດຄອງ ແຕ່ດ້ວຍການທີ່ຕ້ອງຂຶ້ນຢູ່ກັບວັທນະທັມແລະພາສາຂອງແຕ່ລະປະເທດຜູ້ປົກຄອງ ທໍາໃຫ້ວັທນະທັມແລະພາສາ ຂອງເຜົ່າພັນລ້ານຊ້າງ ຖືກຜະສົມກົມກືນ ແລະ ຫລົ່ນຫາຍໄປເປັນອັນມາກ.

ຮູບທັມແລະລັກສນະຣວມຂອງວັທນະທັມແລະພາສາເຜົ່າພັນລ້ານຊ້າງ ທີ່ເຫັນໄດ້ຊັດໄດ້ແກ່ ສິລປະຫມໍລໍາ.ຫາກຈະສືບທອດມໍຣະດົກ ທາງດ້ານວັທນະທັມແລະພາສາ ຂອງເຜົ່າພັນລ້ານຊ້າງ ຈຶ່ງຄວນລິເລີ້ມຈາກ ສິລປະຫມໍລໍາ ເປັນເບື້ອງຕົ້ນ ແລະ ພັທນາໄປສູ່ພາກສ່ວນອື່ນໆ ແລະ ບໍ່ຄວນລືມວ່າ ບຸຄຄລາກອນໃນວົງການສິລປິນຫມໍລໍານັ້ນ ກໍາລັງຕົກຢູ່ຖານະລໍາບາກ ເພາະຂາດການສນັບສນູນ ແລະ ສົງເຄາະຈາກຣັຖ ແມ່ນແຕ່ເສັຽຊີວິຕໄປ ກໍ່ເກືອບຈະຫາໂລງໃສ່ກໍ່ບໍ່ໄດ້ ບໍ່ຕ້ອງກ່າວເຖິງເງິນຊ່ວຍເຫລືອ ຄອບຄົວຂອງຜູ້ເສັຽຊີວິຕ.

ຮູບທັມ ແລະ ລັກສນະຣວມເຫລົ່ານີ້ ກໍາລັງຕ້ອງການຖືກນໍາສເນີ ເພື່ອແລກປ່ຽນສາຣະຄວາມຄິດ ຕໍ່ການພັທນາວັທນະທັມ ແລະ ພາສາເຜົ່າພັນລ້ານຊ້າງ ຢ່າງເປັນຣະບົບສືບໄປ ແລະ ຈຸດລິເລີ້ມນີ້ ຈະເກີດຂຶ້ນ ແລະ ເປັນທີ່ມາໃຫ້ເກີດການສັມມະນາຄັ້ງນີ້:

# ວັຕຖຸປະສົງ:

- ເພື່ອສືບທອດ ວັທນະທັມ ແລະ ພາສາເຜົ່າພັນລ້ານຊ້າງ ໃຫ້ຄົງຢູ່ຄູ່ໂລກສືບໄປ.
- ເພື່ອສ້າງຄວາມເຂົ້າໃຈໃນຫລັກການ ແລະ ວິທີການ ໃນການອະນຸລັກວັທນະທັມແລະພາສາເຜົ່າພັນລ້ານຊ້າງ ໃຫ້ເປັນໄປໃນທິດທາງດຽວກັນ.
- ເພື່ອໃຫ້ ຫມໍລໍາ-ຫມໍແຄນ ສິລປິນອີສານ ໄດ້ພົບປະແລກປ່ຽນຄວາມຄິດເຫັນຮ່ວມກັນ.
- ເພື່ອຫາແນວທາງຣະດົມທຶນ ເພື່ອການກໍ່ຕັ້ງ "ມູລນິທິ ສິລປິນອີສານ."

## ປະເດັນຂອງການສັມນາ.

- ການປະກາດທິດທາງ ຂອງການສືບທອດ ວັທນະທັມ ແລະ ພາສາເຜົ່າພັນລ້ານຊ້າງ.
- ການແລກປ່ຽນຄວາມຄິດເຫັນ ໃນແນວທາງການສືບທອດວັທນະທັມ ພາສາເຜົ່າພັນລ້ານຊ້າງ ແລະ ຫລັກການໃຫ້ການສົງເຄາະສິລປິນຫມໍລໍາ.
- ແນວທາງການຣະດົມທຶນ ເພື່ອຈັດຕັ້ງ "ມູລນິທິ ສິລປິນອີສານ."

**ກຸ່ມເປົ້າຫມາຍ: ສິລປິນອີສານທົ່ວພາກອີສານ 19 ຈັ່ງຫວັດ,ນັກວິຊາການ,ສື່ມວນຊົນແລະປະຊາຊົນທີ່ສົນໃຈ.**

ວັນເວລາ : 11 ມົກຣາ 2549 ເວລາ 12:00 ໂມງທ່ຽງ. 12 ມົກຣາ 2549 ເວລາ 07:00 ໂມງເຊົ້າ.

**ສຖານທີ່ : ທີ່ ໂຮງແຮມນະພາລັຍ ອຳເພີ ເມືອງ. ຈັງຫວັດ ອຸດອນທານີ ປະເທດໄທ.**

**<u>ກຳນົດການສັມນາ:</u>**

## ວັນທີ 11 ມົກຣາ 2549. ( January 11, 2006 ).

12:00 ໂມງທ່ຽງ ລົງທະບຽນ

18:00 ໂມງ ເຂົ້າຫ້ອງພັກ

19:00 ໂມງ ນິເທສການສັມນາ ແກ່ຜູ້ເຂົ້າຮ່ວມສັມນາ

19:30 ໂມງ ຮັບປະທານອາຫານແບບ "ພາເຂົ້າແລງ" ແລະຊົມການສະແດງຈາກ ສິລປິນຫມໍລຳ

## ວັນທີ 12 ມົກຣາ 2549. ( January 12, 2006 ).

07:00 ໂມງເຊົ້າ ອາຫານເຊົ້າທີ່ໂຮງແຮມ

08:30 ໂມງ ພິທີເປີດ ແລະ ບັລຍາຍພິເສດໃນຫົວຂໍ້ "ຄວາມຮັກແພງແດ່ຜູ້ສືບທອດວັທນະທັມແລະພາສາເຜົ່າພັນລ້ານຊ້າງ" ໂດຍ **ພຣະເຈົ້າ ອະນຸວົງສ໌ - ພຣະຊາຍາ ອຸໄຣວັນ ເສດຖາທິຣາຊ.**

09:00 ໂມງ ພັກຮັບປະທານອາຫານວ່າງ

10:00 ໂມງ ແນວທາງການອະນຸຣັກ ວັທນະທັມແລະພາສາເຜົ່າພັນລ້ານຊ້າງ ໂດຍ ຯພນຯ ຊົງຊັຍ ມົງຄົລທັມ

12:00 ໂມງ ອາຫານກາງວັນ

13:00 ໂມງ ຣະດົມຄວາມຄິດເຫັນໃນການຫາທຶນ ເພື່ອກໍ່ຕັ້ງມູລນິທິສິລປິນອີສານ ໂດຍ ອ. ສະວີວັນ ດຳເນີນ, ອ. ທອງຈເຣີນ ດາເຫລົາ, ປ. ສລາດນ້ອຍ ສົ່ງເສີມ ແລະ ອ. ຄຳຕັນ ທອງລ້ວນ.

ກ. ຈັດຕັ້ງຄນະກັມການ ຜູ້ດຳເນີນການຫາທຶນ

ຂ. ອໍມະຕິ ຈັດຕັ້ງຄນະກັມການ ເພື່ອຈົດທະບຽນມູລນິທິ ແລະ ສຖານທີ່ຕັ້ງມູລນິທິ

14:30 ໂມງ ສຣຸບຜົລການສັມນາ ແລະ ປິດການສັມນາ ໂດຍ **ກຳນັນ ດວງ ຈັນນ້ອຍ.**

**ຖ້າຫາກບັນດາທ່ານມີຄວາມສົນໃຈ ກະຣຸນາຕິດຕໍ່ ຄນະປະຊາສັມພັນ:**


ປະເທດໄທ ຕິດຕໍ່ ທ່ານ ກຳນັນ ດວງ ຈັນນ້ອຍ ເບີໂທຣະສັບ: 09-283-1897

ໂທຈາກ ອະເມຣິກາ: 011-66-9-283-1987